ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ທະນາຄານທະນາຊາດ (TBank) ແລະ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ຮ່ວມກັນລິເລີ່ມການບໍລິການຊຳລະສະສາງຂ້າມຊາຍແດນຜ່ານລະບົບ QR Code

ທະນາຄານທະນາຊາດ (TBank) ແລະ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ໄດ້ມີການນຳສະເໜີວິທີການຊຳລະສະສາງຂ້າມຊາຍແດນຂາອອກໂດຍໃຊ້ເທກໂນໂລຍີລະບົບ QR Code ໃນໂທລະສັບມືຖືຄັ້ງທຳອິດໃນງານ ASEAN Payment Connectivity Exhibition ທີ່ຈະຈັດຂຶ້ນທີ່ ຊຽງລາຍໃນວັນທີ 04 ເມສາ ປີ 2019 ນີ້.





ວິທີການຊຳລະສະສາງນີ້ຖືກສ້າງຂຶ້ນຈາກຄວາມສຳເລັດຂອງບໍລິການຊຳລະສະສາງຂ້າມພົມແດນຜ່ານລະບົບQR Code ເມື່ອປີ 2018 ທີ່ຜ່ານມາ, ເຊິ່ງໄດ້ຮັບການພັດທະນາຮ່ວມກັນລະຫວ່າງ ທະນາຄານທະນາຊາດ (TBANK) ແລະ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ທີ່ເປັນທະນາຄານຊັ້ນນຳດ້ານເທັກໂນໂລຍີ e-Banking ທີ່ມີສ່ວນແບ່ງການຕະຫຼາດສູງສຸດໃນ ສປປ ລາວ. ການບໍລິການຊຳລະສະສາງຂ້າມຊາຍແດນເບື້ອງຂາເຂົ້າຜ່ານ QR Code ຈະຊ່ວຍໃຫ້ລູກຄ້າ BCEL ຊຳລະຄ່າສິນຄ້າໃນປະເທດໄທໄດ້ແບບ Real Time ພຽງແຕ່ສະແກນ QR Code ຂອງຮ້ານຄ້າຢູ່ປະເທດໄທ ດ້ວຍຟັງຊັນຊຳລະເງິນ QR Scan “BCEL OnePay” ໃນ Application ມືຖື BCEL One. ເມື່ອລະບົບສຳລະສະສາງມີການກວດສອບລະຫວ່າງທະນາຄານສຳເລັດສົມບູນ, ທະນາຄານທະນາຊາດ TBANK ຈະດຳເນີນການໂອນເງິນພາຍໃນປະເທດໄທໃນນາມຂອງ BCEL ໄປຍັງບັນຊີຂອງຮ້ານຄ້າໄທແຕ່ລະຮ້ານເພື່ອໃຫ້ໝັ້ນໃຈເຖິງຄວາມປອດໄພໃນການຊຳລະເງິນຈາກຜູ້ຊື້ ຫາ ຜູ້ຂາຍ.





ເພື່ອມອບປະສົບການການຊຳລະສະສາງຂ້າມຊາຍແດນຜ່ານມືຖືໄປສູ່ອີກລະດັບໜຶ່ງ, ໃນປີ 2019 ນີ້ TBANK ຮ່ວມມືກັບ BCEL ໄດ້ເພີ່ມບໍລິການຊຳລະເງິນ QR Code ຂ້າມຊາຍແດນເບື້ອງຂາອອກ ຊຶ່ງຈະຊ່ວຍໃຫ້ ລູກຄ້າຂອງ TBANK ຫຼື ລູກຄ້າຄົນໄທທີ່ເດີນທາງມາປະເທດລາວ ສາມາດຊຳລະຄ່າສິນຄ້າທີ່ຮ້ານຄ້າທີ່ມີ OnePay ໄດ້ທັນທີຜ່ານ PromptPay ການຊຳລະເງິນທາງມືຖືທີ່ເປັນຂອງທະນາຄານໄທໄດ້ເຊັ່ນ ນຳໃຊ້ “ທະນາຊາດ Connect” ສຳລັບລູກຄ້າຂອງ TBANK. ໂດຍ Application ຂອງທະນາຄານໄທ ຈະອ່ານລະຫັດ QR ຂອງຮ້ານຄ້າໃນປະເທດລາວ ແລະ ຈະສະແດງລາຍລະອຽດຂໍ້ມູນການຊຳລະເງິນໂດຍອັດຕະໂນມັດເຊັ່ນ: ລາຍລະອຽດຂອງລາຍການທີ່ຊື້, ລາຄາທັງໝົດ ເປັນເງິນກີບ ແລະ ເງິນບາດ. ໃນການເພີ່ມຜະລິດຕະພັນໃໝ່ນີ້ຈະອຳນວຍຄວາມສະດວກໃຫ້ການຊຳລະເງິນຂ້າມຊາຍແດນ ເຊິ່ງຈະເພີ່ມຄວາມໄວໃນການເຮັດທຸລະກຳ, ຫຼຸດຜ່ອນຕົ້ນທຶນການໃຊ້ເງິນສົດ, ເພີ່ມຄວາມສະດວກສະບາຍ ແລະ ຄວາມປອດໄພ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
ທັນສະໄໝ ວ່ອງໄວ ໝັ້ນໃຈ
Call center: 1555, Facebook: BCEL Bank, Website: www.bcel.com.la